ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0144 /ກງ

ນະຄອນຫຼວງວຽງຈັນ, ວັນທີ 22 ມັງກອນ 2025

# ຄຳແນະນຳ
# ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້
# ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຼນິກ (AMIS)

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ກົດໝາຍ ວ່າດ້ວຍເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດການນຳໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຼນິກ (AMIS) ຢ່າງເປັນລະບົບຕໍ່ເນື່ອງ ຢູ່ໃນຂອບເຂດທົ່ວປະເທດ ສະບັບເລກທີ 2965/ກງ, ລົງວັນທີ 23 ກັນຍາ 2022;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 4042/ຄຊລ, ລົງວັນທີ 09 ຕຸລາ 2024.

## ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ ແລະ ລະດັບຄາດໝາຍ

ເພື່ອສ້າງຄວາມສະດວກ ແລະ ເປັນການປັບປຸງ ກົນໄກການຄຸ້ມຄອງ, ການນຳໃຊ້, ການຂຶ້ນບັນຊີ ແລະ ການຂຶ້ນທະບຽນຊັບສິນຂອງລັດ ໃຫ້ມີປະສິດທິຜົນ ແລະ ທັນເປັນທັນສະໄໝ ດ້ວຍລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຼນິກ (Assets Management Information System: AMIS) ໃນຮູບແບບອອນໄລນ໌ ແລະ ເວັບເບສ (Web-based), ສາມາດເຊື່ອມຕໍ່ກັບລະບົບອື່ນ ແລະ ລວມສູນຖານຂໍ້ມູນຊັບສິນຂອງລັດ ທຸກປະເພດ ແລະ ສາມາດວິເຄາະ-ວິໄຈຂໍ້ມູນຊັບສິນຂອງລັດ ແນ່ໃສ່ສ້າງເງື່ອນໄຂອຳນວຍຄວາມ

ສະດວກ, ມີຄວາມປອດໄພ, ປະຢັດ, ໂປ່ງໃສ, ຮັບປະກັນການຄຸ້ມຄອງຖານລາຍຮັບຈາກຊັບສິນຂອງລັດ ແຈ້ງມອບເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ ທັງເປັນການແນະນຳຂັ້ນຕອນ, ວິທີການຄຸ້ມຄອງນຳໃຊ້ລະບົບ AMIS ແລະ ການແບ່ງຄວາມຮັບຜິດຊອບໃຫ້ພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

**ມາດຕາ 2 ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS)**

ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS) ແມ່ນການພັດທະນາລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ຫັນການຄຸ້ມຄອງວຽກງານຊັບສິນຂອງລັດໃຫ້ເປັນທັນສະໄໝ; ຄຸ້ມຄອງການນຳໃຊ້ລະບົບເຕັກໂນໂລຊີ, ຂໍ້ມູນຂ່າວສານ ເຂົ້າໃນວຽກງານວິຊາສະເພາະຊັບສິນຂອງລັດໃນຂອບເຂດທົ່ວປະເທດ;

ການຄຸ້ມຄອງຊັບສິນຂອງລັດ ດ້ວຍລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS) ແມ່ນຫຼັກການຄຸ້ມຄອງ ແລະ ຕິດຕາມກວດກາການນຳໃຊ້ຊັບສິນຂອງລັດ ແບບເອເລັກໂຕຣນິກ ເວົ້າລວມ ເວົ້າສະເພາະ ແມ່ນການຕິດຕາມກວດກາການນຳໃຊ້ຊັບສິນຂອງລັດ ແລະ ຄຸ້ມຄອງຂໍ້ມູນສະຖິຕິຊັບສິນຂອງລັດ ປະເພດລັດຖະສົມບັດ ປະກອບມີສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນຮາກຖານໃນຂອບເຂດທົ່ວປະເທດ;

ການຄຸ້ມຄອງຂໍ້ມູນບັນຊີຊັບສິນ, ສະຖິຕິທາງດ້ານຊັບສິນຂອງລັດ ແລະ ການວິເຄາະ-ວິໄຈຂໍ້ມູນ ຊັບສິນຂອງລັດ ດ້ວຍລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS) ແມ່ນວຽກງານພື້ນຕໍ່ຂອງກົມຄຸ້ມຄອງຊັບສິນແຫ່ງລັດຂອງ ກະຊວງການເງິນ, ມີການຕິດຕາມກວດກາການນຳໃຊ້ຊັບສິນຂອງລັດ, ຂຶ້ນບັນຊີ, ຂຶ້ນທະບຽນ, ການກຳນົດເລກລະຫັດ, ເລກທະບຽນ, ສັງລວມບັນຊີ, ການຈັດຊື້, ການສ້າງໃໝ່ ແລະ ການສະສາງຊັບສິນຂອງລັດໃນແຕ່ລະປີ ປະເພດສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ລວມທັງຊັບສິນທີ່ບໍ່ມີເຈົ້າຂອງ ຫຼື ອົງການສານໄດ້ຕັດສິນຮິບມາເປັນຂອງລັດ ແລະ ຊັບສິນທີ່ໄດ້ມາຈາກການກູ້ຢືມ-ຊ່ວຍເຫຼືອລ້າ ໃນຂອບເຂດທົ່ວປະເທດ.

**ມາດຕາ 3 ຂອບເຂດນຳໃຊ້**

ຄຳແນະນຳສະບັບນີ້ ນຳໃຊ້ຢູ່ບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ທີ່ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS).

## ໝວດທີ 2
## ການຄຸ້ມຄອງ ແລະ ນຳໃຊ້, ຂັ້ນຕອນ ແລະ ກົນໄກການຄຸ້ມຄອງ

**ມາດຕາ 4 ການຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດແບບເອເລັກໂຕຣນິກ (AMIS)**

1. ລັດຖະບານ ມອບສິດໃຫ້ກະຊວງການເງິນ ໃນການຄຸ້ມຄອງຊັບສິນ ທີ່ລັດລົງທຶນສ້າງຂຶ້ນ ຫຼື ໄດ້ມາດ້ວຍຄວາມຊອບທຳຕາມກົດໝາຍ ແລະ ລະບຽບການ ເຊິ່ງປະກອບດ້ວຍສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມອບໃຫ້ການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນ ເປັນຜູ້ຄຸ້ມຄອງນຳໃຊ້ ແບບລວມສູນ ດ້ວຍການຂຶ້ນບັນ

ຊີ, ການຂຶ້ນທະບຽນ, ຄຸ້ມຄອງຖານລາຍຮັບ, ການຕີມູນຄ່າຊັບສິນ, ການຊື້ ແລະ ການສ້າງໃໝ່, ການມອບ-ໂອນ, ການຫັນຊັບສິນເປັນທຶນ, ການແລກປ່ຽນ, ການໃຫ້ເຊົ່າ ຫຼື ສໍາປະທານ, ການເຂົ້າຮຸ້ນ ຫຼື ຮ່ວມທຶນ ແລະ ການປ່ຽນສິດຄຸ້ມຄອງຊັບສິນຂອງລັດ;

2. ນໍາໃຊ້ລະບົບທີ່ທັນສະໄໝ: (1) ເພື່ອຄຸ້ມຄອງ ແລະ ສັງລວມຂໍ້ມູນຊັບສິນຂອງລັດ ໃຫ້ຄົບຖ້ວນ ແລະ ຊັດເຈນ ໃນຂອບເຂດທົ່ວປະເທດ ແລະ ຄຸ້ມຄອງຊັບສິນຂອງລັດບໍ່ໃຫ້ຕົກເຮ່ຍເສຍຫາຍ; (2) ເພື່ອຄຸ້ມຄອງຖານລາຍຮັບຈາກຊັບສິນຂອງລັດໃຫ້ໄດ້ຄົບຖ້ວນ, ຖືກຕ້ອງຕາມກໍານົດເວລາ, ມີຄວາມໂປ່ງໃສ, ສະດວກ , ວ່ອງໄວ ແລະ ສາມາດກວດສອບໄດ້ ເປັນຕົ້ນ: ການນໍາໃຊ້ລະບົບບັນທຶກບັນດາຂໍ້ມູນທີ່ດິນ-ເຮືອນ, ສິ່ງປຸກສ້າງ, ຕຶກອາຄານ, ພາຫະນະ, ບັນດາສັນຍາສໍາປະທານ, ສັນຍາເຊົ່າຊັບສິນຂອງລັດ ແລະ ອື່ນໆໃຫ້ເປັນລະບົບຄົບຊຸດ, ລະບົບການຕິດຕາມກວດກາ ແລະ ເກັບກໍາຖານລາຍຮັບໃຫ້ຄົບຖ້ວນ ແລະ ທັນຕາມກໍານົດເວລາ; (3) ວິເຄາະ-ວິໄຈຂໍ້ມູນຊັບສິນຂອງລັດ;

3. ການຂຶ້ນທະບຽນຊັບສິນ ແບບເອເລັກໂຕຣນິກ ສາມາດດໍາເນີນໄດ້ ຜ່ານການປ້ອນຂໍ້ມູນເຂົ້າລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ໃນຮູບແບບອອນໄລນ໌; ລະບົບຈະກໍານົດການໃສ່ລະຫັດໃຫ້ຊັບສິນ ຫຼື ການໃສ່ເລກປະຈໍາຕົວໃຫ້ຊັບສິນແບບອັດຕະໂນມັດ (Automatic) ໂດຍອີງຕາມລາຍການຈັດລໍາດັບຂອງສູນສະຖິຕິແຫ່ງຊາດ ໃນການກໍານົດລະຫັດກະຊວງ, ອົງການທຽບເທົ່າກະຊວງ ແລະ ລະຫັດແຂວງ ;




ກະຊວງການເງິນ ເປັນຜູ້ກໍານົດເລກລະຫັດ, ເລກທະບຽນ ແລະ ເຄື່ອງໝາຍຊັບສິນຂອງລັດ ແຕ່ລະປະເພດ ເພື່ອຄວາມເປັນເອກະພາບໃນການຂຶ້ນທະບຽນ;

ກະຊວງການເງິນ ເປັນຜູ້ຄົ້ນຄວ້າ ກໍານົດ ແຜ່ນກາໝາຍການນໍາໃຊ້ຊັບສິນຂອງລັດ ປະເພດຕ່າງໆເຊັ່ນ: ທີ່ດິນ-ເຮືອນ, ສິ່ງປຸກສ້າງ, ຕຶກອາຄານ, ພາຫະນະ, ວັດຖຸອຸປະກອນ ແລະ ຊັບສິນອື່ນໆ ຂອງລັດ, ກໍານົດຂະໜາດ, ຮູບແບບ, ຄວາມໝາຍ, ລະຫັດ ແລະ QR Code ເພື່ອຈໍາແນກ ແລະ ສາມາດຕິດຕາມກວດກາຊັບສິນຂອງລັດປະເພດຕ່າງໆ ທີ່ປະກອບໃຫ້ແຕ່ລະພາກສ່ວນ;

ການກໍານົດການໃສ່ລະຫັດຊັບສິນ ໃນລະບົບ ສາມາດປັບປຸງປ່ຽນແປງໄດ້ຕາມການນໍາໃຊ້ລະຫັດ COA ແລະ ສາມາດເຊື່ອມຕໍ່ຂໍ້ມູນກັບລະບົບອື່ນ ຕາມສາລະບານງົບປະມານ.

4. ການຂຶ້ນບັນຊີຊັບສິນ ແບບເອເລັກໂຕຣນິກ ແມ່ນການລວບລວມເອົາຂໍ້ມູນທັງໝົດ ຂອງຊັບສິນທີ່ໄດ້ຂຶ້ນທະບຽນແລ້ວບັນທຶກເຂົ້າໄວ້ໃນຖານຂໍ້ມູນ ແລະ ສາມາດສ້າງຕາຕະລາງສັງລວມລາຍງານຕາມລໍາດັບ ແລະ ແຍກຕາມແຕ່ລະໝວດ ແລະ ແຕ່ລະປະເພດຂອງຊັບສິນ;

ບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງໄດ້ນໍາເອົາຊັບສິນທີ່ມີອາຍຸການນໍາໃຊ້ໄດ້ຍາວນານກວ່າ 1 ປີ ຂຶ້ນໄປ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ລວມທັງປະເພດສັງຫາລິມະຊັບ ແລະ ອະສັງຫາລິມະຊັບ, ເຊິ່ງໄດ້ມາໂດຍການນໍາໃຊ້ງົບປະມານຂອງລັດ ລວມທັງທຶນກູ້ຢືມ, ທຶນຊ່ວຍເຫຼືອລ້າ, ຈາກການປະກອບສ່ວນຂອງຊຸມຊົນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ມອບໃຫ້ລັດ

ແຕ່ສູນກາງລົງຮອດທ້ອງຖິ່ນໄປຂຶ້ນບັນຊີລວມສູນ ຢູ່ຂະແໜງການຄຸ້ມຄອງຊັບສິນແຫ່ງລັດທີ່ຕົນຂຶ້ນກັບ ຕາມກົດໝາຍ ແລະ ລະບຽບການ;

5. ການຄຸ້ມຄອງຖານລາຍຮັບຈາກຊັບສິນແຫ່ງລັດ ແມ່ນການປ້ອນຂໍ້ມູນເຂົ້າໃນລະບົບ ຕາມແບບຟອມກຳນົດ ເພື່ອບັນທຶກບັນດາຂໍ້ມູນທີ່ດິນ-ເຮືອນ, ສິ່ງປຸກສ້າງ, ຕຶກອາຄານ, ພາຫະນະ, ບັນດາສັນຍາສຳປະທານ, ສັນຍາເຊົ່າຊັບສິນຂອງລັດ ແລະ ອື່ນໆ;

6. ການດຳເນີນວຽກງານຄຸ້ມຄອງຊັບສິນແຫ່ງລັດ ໃນກໍລະນີປະຕິບັດທາງເອເລັກໂຕຣນິກ ແມ່ນປະຕິບັດຕາມຂັ້ນຕອນຄືກັນກັບການປ້ອນຂໍ້ມູນເຂົ້າໃນແບບຟອມ Excel, ການທັນເປັນທັນສະໄໝ ຕ້ອງຜ່ານການທົດລອງກ່ອນການນຳໃຊ້, ຝຶກອົບຮົມໃຫ້ເຂົ້າໃຈ ແລະ ສາມາດປະຕິບັດໄດ້ຢ່າງຊຳນານງານ, ເຊື່ອມໂຍງຂໍ້ມູນກັບລະບົບອື່ນຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການສ້າງເອກະສານລາຍງານ ແລະ ໄດ້ຮັບອະນຸຍາດຈາກກະຊວງການເງິນ.

**ມາດຕາ 5 ຂັ້ນຕອນ ແລະ ກົນໄກການຄຸ້ມຄອງນຳໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດແບບເອເລັກໂຕຣນິກ (AMIS)**

1. ການນຳໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS) ຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ແມ່ນຂະແໜງຄຸ້ມຄອງຊັບສິນຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ສາມາດພົວພັນ ແລະ ສົມທົບກັບກົມຄຸ້ມຄອງຊັບສິນແຫ່ງລັດ, ກະຊວງການເງິນ ເພື່ອຂື້ນແຜນຝຶກອົບຮົມການນຳໃຊ້ລະບົບ ແລະ ມອບລະຫັດຜູ້ນຳໃຊ້ (User) ໃຫ້ຕາມລະບຽບການກຳນົດ;

2. ກໍລະນີມີການປ່ຽນແປງຜູ້ຮັບຜິດຊອບບັນຊີຊັບສິນ ຕ້ອງແຈ້ງການປ່ຽນແປງດັ່ງກ່າວ ແລະ ສະເໜີການນຳໃຊ້ລະບົບ AMIS, ເຊິ່ງພະນັກງານທີ່ຮັບຜິດຊອບບັນຊີຊັບສິນຜູ້ໃໝ່ ຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ສາມາດຂໍຊື່ ແລະ ລະຫັດ (User) ນຳກົມຄຸ້ມຄອງຊັບສິນແຫ່ງລັດ ເພື່ອເຂົ້ານຳໃຊ້ລະບົບ AMIS;

3. ກະຊວງການເງິນ (ກົມຄຸ້ມຄອງຊັບສິນແຫ່ງລັດ) ເປັນຜູ້ກຳນົດສິດຜູ້ນຳໃຊ້ລະບົບພຽງຜູ້ດຽວ ແລະ ຝຶກອົບຮົມການນຳໃຊ້ລະບົບ ໃຫ້ບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ;

4. ບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ສະເໜີ ການກຳນົດສິດຜູ້ນຳໃຊ້ລະບົບ ພາຍໃນກົມກອງ, ພະແນກການຂອງຕົນ, ເຊິ່ງໄດ້ຮັບອະນຸຍາດຈາກກະຊວງການເງິນຢ່າງເປັນທາງການ ແລະ ຂື້ນແຜນເພື່ອຝຶກອົບຮົມການນຳໃຊ້ລະບົບ ໃຫ້ບັນດາກົມກອງ ຂັ້ນສູນກາງອ້ອມຂ້າງຂອງຕົນ ແລະ ພະແນກການ ຢູ່ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

## ໝວດທີ 3
## ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ຂອງບັນດາພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 6 ໜ້າທີ່ຮັບຜິດຊອບຂອງແຕ່ລະພາກສ່ວນ**

1. ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ

- ມອບໃຫ້ກົມຄຸ້ມຄອງຊັບສິນແຫ່ງລັດ ສາມາດເຂົ້າເຖິງຖານຂໍ້ມູນຈິງ ແລະ ຂໍ້ມູນສຳຮອງຂອງລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS);

- ສຳລັບຖານຂໍ້ມູນຂອງລະບົບ AMIS. ມອບໃຫ້ທ່ານ ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ ແຕ່ງຕັ້ງ ພຽງ 02 ທ່ານ ຄື: ຄະນະກົມຜູ້ຊີ້ນຳ ແລະ ຜູ້ຄຸ້ມຄອງລະບົບ ຮັບຜິດຊອບເກັບຮັກສາ User name ແລະ Password ຂອງຜູ້ຄຸ້ມຄອງລະບົບຖານຂໍ້ມູນ;

- ແນະນຳວິທີການ, ຂັ້ນຕອນການນຳໃຊ້ລະບົບຂໍ້ມູນຂ່າວສານ ຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS) ໃຫ້ແກ່ພະນັກງານ ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ແລະ ພະນັກງານ ຜູ້ຮັບຜິດຊອບບັນຊີຊັບສິນຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອປ້ອນຂໍ້ມູນເຂົ້າຕາມແບບຟອມໃນລະບົບ AMIS;

- ສະເພາະເຈົ້າໜ້າທີ່ຄຸ້ມຄອງຊັບສິນແຫ່ງລັດ ແມ່ນຈະແນະນຳການອອກໃບຄິດໄລ່ ແລະ ໃບກວດຜ່ານສັນຍາຕ່າງໆ ຜ່ານລະບົບ AMIS ເພື່ອໄປແຈ້ງມອບລາຍຮັບຜ່ານ ລະບົບ TaxRIS, ອຳນວຍຄວາມສະດວກ, ກວດກາ, ຕິດຕາມບັນດາທຸລະກິດ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ແຈ້ງມອບລາຍຮັບຊັບສິນຂອງລັດຜ່ານລະບົບ TaxRIS, ອອກໃບຄິດໄລ່ໃນກໍລະນີຫາກມີການກວດກາເພີ່ມ, ຄ່າປັບໄໝ ແລະ ອື່ນໆ;

- ຄຸ້ມຄອງລະບົບ, ກວດກາ ແລະ ຕິດຕາມ ບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ຢ່າງເປັນປະຈຳ, ຮັບປະກັນບັນດາຂໍ້ມູນການຂຶ້ນບັນຊີ-ການຂຶ້ນທະບຽນຊັບສິນ ແລະ ບັນດາສັນຍາຕ່າງໆ ໃນລະບົບໃຫ້ຖືກຕ້ອງ;

- ໂຄສະນາເຜີຍແຜ່ນິຕິກຳ, ຄູ່ມື ແລະ ຂັ້ນຕອນການນຳໃຊ້ລະບົບ AMIS;

- ຈັດຝຶກອົບຮົມການນຳໃຊ້ລະບົບ AMIS ໃຫ້ຂະແໜງຄຸ້ມຄອງຊັບສິນແຫ່ງລັດ ແລະ ທຸກຂະແໜງການໃນຂອບເຂດທົ່ວປະເທດ ໂດຍສົມທົບກັບຫ້ອງການກະຊວງການເງິນ, ກົມຈັດຕັ້ງ-ພະນັກງານ, ສະຖາບັນການເງິນ-ການບັນຊີ;

- ຕິດຕາມກວດກາ, ບຳລຸງຮັກສາ ເຄືອຂ່າຍຂໍ້ມູນຂ່າວສານ ແລະ ລະບົບຄວາມປອດໄພຂໍ້ມູນໃຫ້ສາມາດນຳໃຊ້ໄດ້ຕະຫຼອດເວລາ;

- ຄຸ້ມຄອງ, ສັງລວມຂໍ້ມູນສະຖິຕິ ກ່ຽວກັບການນຳໃຊ້ຊັບສິນຂອງລັດ;

- ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດການມອບພັນທະລາຍຮັບ ບໍ່ແມ່ນພາສີ-ສ່ວຍສາອາກອນ ແລະ ລາຍຮັບປະເພດອື່ນໆ ໃນຂອບເຂດທົ່ວປະເທດ ທີ່ແຈ້ງມອບຜ່ານລະບົບ TaxRIS ຕາມກົດໝາຍ ແລະ ລະບຽບການ;

- ຄຸ້ມຄອງຖານລາຍຮັບຈາກຊັບສິນຂອງລັດ ເຊັ່ນ: ສັງຫາລິມະຊັບ, ອະສັງຫາລິມະຊັບ, ຊັບພະຍາກອນ ແລະ ຊັບສິນຂອງລັດອື່ນໆ;

- ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຕາມພັນທະລາຍຮັບຊັບສິນແຫ່ງລັດ ທີ່ແຈ້ງມອບຜ່ານລະບົບ TaxRIS;

- ເຂົ້າຮ່ວມຄົ້ນຄວ້າ, ສ້າງແຜນການພັດທະນາ ລະບົບເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ ທັນການຄຸ້ມຄອງວຽກງານຊັບສິນແຫ່ງລັດ ໃຫ້ເປັນທັນສະໄໝ, ຄຸ້ມຄອງນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ເຂົ້າໃນວຽກງານວິຊາສະເພາະຊັບສິນແຫ່ງລັດ ໃນຂອບເຂດທົ່ວປະເທດ;

- ຄົ້ນຄວ້າ, ສ້າງ ແລະ ພັດທະນາ ລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS), ນຳໃຊ້ລະບົບຂໍ້ມູນຂ່າວສານ-ເຕັກໂນໂລຊີ ເຂົ້າໃນວຽກງານຄຸ້ມຄອງຊັບສິນແຫ່ງລັດ; ສ້າງແຜນຄຸ້ມຄອງ, ບຳລຸງຮັກສາລະບົບ ແລະ ເຊື່ອມຕໍ່ກັບລະບົບຄຸ້ມຄອງຖານຂໍ້ມູນອື່ນທີ່ກ່ຽວຂ້ອງ (FMIS, TaxRIS, LAOFIDA, ລະບົບຄຸ້ມຄອງທີ່ດິນ, ລະບົບຄຸ້ມຄອງພາຫະນະ) ແລະ ພາກສ່ວນທີ່ກ່ຽວຂ້ອງ;

- ຄຸ້ມຄອງຖານລາຍຮັບ ຄ່າທຳນຽມຈົດທະບຽນເອກະສານ, ຄ່າຂາຍເຄື່ອງຮົບ ແລະ ລາຍຮັບອື່ນໆ;

- ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຕາມພັນທະລາຍຮັບຊັບສິນແຫ່ງລັດ ທີ່ແຈ້ງມອບຜ່ານລະບົບ TaxRIS ໂດຍຜ່ານການເຊື່ອມຕໍ່ກັບລະບົບ AMIS;

- ສັງລວມແຜນຝຶກອົບຮົມ ການນຳໃຊ້ ລະບົບຂໍ້ມູນຂ່າວສານ, ເວບໄຊ໌ ແລະ ເຄື່ອງມືເອເລັກໂຕຣນິກອື່ນໆ ໃຫ້ແກ່ ພະນັກງານ-ລັດຖະກອນ ຂະແໜງຄຸ້ມຄອງຊັບສິນແຫ່ງລັດ ໃນຂອບເຂດທົ່ວປະເທດ;

- ພັດທະນາ ແລະ ປັບປຸງລະບົບ ຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຼນິກ (AMIS) ທີ່ກົມຄຸ້ມຄອງຊັບສິນແຫ່ງລັດນຳໃຊ້ໃນປະຈຸບັນໃຫ້ທັນກັບສະພາບການເຊັ່ນ: ພັດທະນາໂມດູນຕ່າງໆ ໃຫ້ຄົບຖ້ວນສົມບູນ ໃນແຕ່ລະໄລຍະ, ສາມາດສ້າງ ແລະ ປັບປຸງລະບົບລາຍງານຕ່າງໆ ກ່ຽວກັບການຂຶ້ນບັນຊີ-ຂຶ້ນທະບຽນຊັບສິນ, ການປັບປຸງແບບຟອມປ້ອນຂໍ້ມູນຕ່າງໆໃນລະບົບ ເປັນແຕ່ລະໄລຍະ, ພັດທະນາລະບົບການເຊື່ອມຕໍ່ກັບລະບົບອື່ນໆ ໃຫ້ມີຄວາມປອດໄພ, ຈັດຝຶກອົບຮົມທາງດ້ານເຕັກນິກຂັ້ນພື້ນຖານ, ແນະນຳຂັ້ນຕອນ ແລະ ວິທີການນຳໃຊ້ລະບົບ AMIS;

- ສ້າງ ແລະ ປັບປຸງປຶ້ມຄູ່ມືການນຳໃຊ້ລະບົບ AMIS ເປັນແຕ່ລະໄລຍະ, ຮັບປະກັນຄວາມປອດໄພສຳລັບການປ້ອນຂໍ້ມູນເຂົ້າໃນລະບົບ AMIS ໃຫ້ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ທຸກເວລາ;

- ສຳລັບການບຳລຸງຮັກສາລະບົບ AMIS, ມອບໃຫ້ກົມຄຸ້ມຄອງຊັບສິນແຫ່ງລັດ ເປັນໃຈກາງປະສານສົມທົບກັບຫ້ອງການກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການຈັດຊື້-ຈັດຈ້າງບໍລິສັດຜູ້ພັດທະນາລະບົບ ເພື່ອມາຄຸ້ມຄອງ ແລະ ບຳລຸງຮັກສາລະບົບ AMIS ໃຫ້ມີຄວາມປອດໄພ ແລະ ນຳໃຊ້ລະບົບໃຫ້ເປັນປົກກະຕິຕໍ່ເນື່ອງ, ກວດກາເຕັກນິກ ແລະ ບຳລຸງຮັກສາລະບົບໃຫ້ສາມາດນຳໃຊ້ໄດ້ຕະຫຼອດເວລາ;

- ສະຫຼຸບ, ລາຍງານ ປະສິດທິພາບການນຳໃຊ້, ແຜນປັບປຸງ ແລະ ບຳລຸງຮັກສາລະບົບ ເພື່ອສະເໜີກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ແລະ ການນຳກະຊວງການເງິນ ຮັບຊາບ ແລະ ພິຈາລະນາ ເປັນແຕ່ລະໄລຍະ.

2. ຂະແໜງການສ່ວຍສາອາກອນ

- ຂະແໜງສ່ວຍສາອາກອນ ມີໜ້າທີ່ນຳໃຊ້ ແລະ ບໍລິການສະໜອງຂໍ້ມູນການຄິດໄລ່ ແລະ ໃບກວດຜ່ານສັນຍາຕ່າງໆຈາກລະບົບ (AMIS) ເພື່ອອຳນວຍຄວາມສະດວກໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ສາມາດແຈ້ງມອບພັນທະປະເພດຕ່າງໆອີງຕາມກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022 ຜ່ານລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ (TaxRIS);

- ຂະແໜງສ່ວຍສາອາກອນແຕ່ລະຂັ້ນ ຕ້ອງກວດກາຄືນ, ຕິດຕາມ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ແຈ້ງມອບລາຍຮັບຊັບສິນຂອງລັດ ຜ່ານລະບົບ TaxRIS ຫຼື ອອກໃບແຈ້ງມອບເພີ່ມເຕີມກໍລະນີຫາກມີການກວດກາພົບເຫັນການແຈ້ງມອບບໍ່ຄົບຖ້ວນ, ຄ່າປັບໄໝ ແລະ ອື່ນໆ;

- ສົມທົບກັບກົມຄຸ້ມຄອງຊັບສິນແຫ່ງລັດ, ຄັງເງິນແຫ່ງຊາດ ແລະ ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ເຊື່ອມຕໍ່ຂໍ້ມູນ ລະຫວ່າງລະບົບ AMIS, TaxRIS ແລະ LIFMIS.

3. ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ

- ຄຸ້ມຄອງ, ຕິດຕາມ ແລະ ແກ້ໄຂບັນຫາລະບົບພື້ນຖານໂຄງລ່າງເຄືອຂ່າຍສຳລັບຜູ້ໃຊ້ງານ ຢູ່ບັນດາກົມອ້ອມຂ້າງກະຊວງ, ອົງການທຽບເທົ່າກະຊວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ;

- ຄຸ້ມຄອງ, ເຝົ້າລະວັງ ແລະ ບຳລຸງຮັກສາລະບົບປ້ອງກັນຄວາມປອດໄພຂໍ້ມູນ ໃນຂອບເຂດທົ່ວປະເທດ ເພື່ອປ້ອງກັນການໂຈມຕີ ຫຼື ລັກລອບຂໍ້ມູນຈາກພາຍນອກ;

- ຕິດຕາມ, ກວດສອບ, ປະເມີນຜົນການນຳໃຊ້ລະບົບທັງໝົດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ຂຶ້ນກັບຄວາມຮັບຜິດຊອບໃຫ້ທັນສະພາບການ;

- ປະສານສົມທົບເຮັດວຽກກັບກົມຄຸ້ມຄອງຊັບສິນແຫ່ງລັດ ແລະ ບໍລິສັດຜູ້ພັດທະນາ ເພື່ອສ້າງການເຊື່ອມຕໍ່ລະບົບ ກັບລະບົບຖານຂໍ້ມູນອື່ນ ເຊັ່ນ : FMIS, TaxRIS, LAOFIDA, ລະບົບຄຸ້ມຄອງທີ່ດິນ ແລະ ລະບົບຄຸ້ມຄອງພາຫະນະ ໃນຮູບແບບ API.

4 ບັນດາອົງການຈັດຕັ້ງພັກ-ລັດ ແລະ ກະຊວງ

- ມີໜ້າທີ່ແຈ້ງການແນະນຳວິທີການ, ຂັ້ນຕອນການນຳໃຊ້ລະບົບຂໍ້ມູນຂ່າວສານ ຄຸ້ມຄອງຊັບສິນ ແຫ່ງລັດ ແບບເອເລັກໂຕຣນິກ (AMIS) ໃຫ້ແກ່ພະນັກງານ ຜູ້ຮັບຜິດຊອບ ບັນຊີຊັບສິນ ຂອງບັນດາກົມກອງອ້ອມຂ້າງກະຊວງຂອງຕົນ ເພື່ອປ້ອນຂໍ້ມູນເຂົ້າຕາມແບບຟອມໃນລະບົບ AMIS;

- ກວດນັບຊັບສິນ ແລະ ກວດກາເນື້ອໃນຂໍ້ມູນ ກ່ອນການປ້ອນຂໍ້ມູນເຂົ້າໃນລະບົບ ແລະ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ເນື້ອໃນຂໍ້ມູນ ທີ່ຕົນສ້າງຂຶ້ນ ຫຼື ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

- ຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນ ຂອງຂໍ້ມູນ ທີ່ຕົນສະໜອງ ແລະ ປ້ອນຂໍ້ມູນເຂົ້າໃນລະບົບ, ລາຍງານຄວາມຜິດພາດຂອງຂໍ້ມູນ ໃຫ້ແກ່ຜູ້ຄຸ້ມຄອງຂໍ້ມູນຊາບ.

5. ບັນດາແຂວງ, ນະຄອນຫຼວງວຽງຈັນ

- ມີໜ້າທີ່ແຈ້ງການແນະນຳວິທີການ, ຂັ້ນຕອນການນຳໃຊ້ລະບົບຂໍ້ມູນຂ່າວສານ ຄຸ້ມຄອງຊັບສິນ ແຫ່ງລັດ ແບບເອເລັກໂຕຼນິກ (AMIS) ໃຫ້ແກ່ພະນັກງານ ຜູ້ຮັບຜິດຊອບ ບັນຊີຊັບສິນ ຂອງບັນດາພະແນກການ ແລະ ທຽບເທົ່າ ອ້ອມຂ້າງແຂວງຂອງຕົນ ເພື່ອປ້ອນຂໍ້ມູນເຂົ້າຕາມແບບຟອມໃນລະບົບ AMIS; ກວດນັບຊັບສິນ ແລະ ກວດກາເນື້ອໃນຂໍ້ມູນ ກ່ອນການປ້ອນຂໍ້ມູນເຂົ້າໃນລະບົບ ແລະ ຕ້ອງຮັບຜິດ ຊອບຕໍ່ໜ້າກົດໝາຍຕໍ່ເນື້ອໃນຂໍ້ມູນ ທີ່ຕົນສ້າງຂຶ້ນ ຫຼື ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

- ຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນ ຂອງຂໍ້ມູນ ທີ່ຕົນສະໜອງ ແລະ ປ້ອນຂໍ້ມູນເຂົ້າໃນລະບົບ, ລາຍງານຄວາມຜິດພາດຂອງຂໍ້ມູນ ໃຫ້ແກ່ຜູ້ຄຸ້ມຄອງຂໍ້ມູນຊາບ.

6. ຄວາມຮັບຜິດຊອບຂອງຜູ້ຄຸ້ມຄອງບັນຊີຊັບສິນ

- ຕິດຕາມກວດກາ, ເກັບກຳຂໍ້ມູນບັນຊີຊັບສິນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນ;

- ເປັນຜູ້ປ້ອນ ແລະ ບັນທຶກຂໍ້ມູນ ຜ່ານລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS) ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ;

- ປະຕິບັດ ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການຂອງກະຊວງການເງິນ ໃນການປ້ອນ ແລະ ບັນທຶກຂໍ້ມູນຊັບສິນປະເພດຕ່າງໆ ແລະ ບັນດາສັນຍາອື່ນໆ ຜ່ານລະບົບ AMIS;

- ກໍລະນີມີການປ່ຽນແປງຂໍ້ມູນຂອງຜູ້ຄຸ້ມຄອງບັນຊີຊັບສິນ ຢູ່ບັນດາກົມ, ສະຖາບັນອ້ອມຂ້າງກະຊວງການເງິນ ຕ້ອງແຈ້ງໃຫ້ຜູ້ດູແລລະບົບ AMIS ຂອງກົມຄຸ້ມຄອງຊັບສິນແຫ່ງລັດ, ສຳລັບ ການປ່ຽນແປງຂໍ້ມູນຂອງຜູ້ຄຸ້ມຄອງບັນຊີຊັບສິນ ຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງແຈ້ງໃຫ້ຜູ້ດູແລລະບົບ ບ່ອນທີ່ຕົນຂຶ້ນກັບຊາບເພື່ອປັບປຸງແກ້ໄຂຂໍ້ມູນດັ່ງກ່າວໃຫ້ຖືກຕ້ອງ ແລະ ເພື່ອປັບປຸງປິດລະຫັດຜູ້ນຳໃຊ້ເກົ່າ-ເປີດລະຫັດຜູ້ນຳໃຊ້ໃໝ່, ສ່ວນລະຫັດຜູ້ດູແລລະບົບຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງແຈ້ງກົມຄຸ້ມຄອງຊັບສິນແຫ່ງລັດ ເພື່ອເປັນຜູ້ໃຫ້ສິດ ຕາມລະບຽບການ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 7 ຂໍ້ຫ້າມທົ່ວໄປ**

ຫ້າມ ເຈົ້າໜ້າທີ່ ຄຸ້ມຄອງຊັບສິນຂອງລັດ, ຜູ້ຄຸ້ມຄອງບັນຊີຊັບສິນ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງມີພຶດຕິກຳ ດັ່ງນີ້ :

1. ເຂົ້າເຖິງ, ເກັບກຳ, ນຳໃຊ້, ເປີດເຜີຍ, ທຳລາຍ, ແກ້ໄຂ, ປອມແປງ, ສະໜອງຂໍ້ມູນ ຂ່າວສານ ທີ່ເປັນຄວາມລັບຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;
2. ເຂົ້າຫາ, ທຳລາຍ, ດັດແປງ, ປອມແປງ, ສະໜອງ, ນຳໃຊ້ ຫຼື ເຜີຍແຜ່ຂໍ້ມູນ ຂ່າວສານ ຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂດຍບໍ່ໄດ້ຮັບອະນຸຍາດ;
3. ສົ່ງ ຫຼື ໂອນຂໍ້ມູນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງການເງິນ;
4. ບໍ່ອະນຸຍາດໃຫ້ຜູ້ອື່ນນຳໃຊ້ຊື່ຜູ້ໃຊ້ ແລະ ລະຫັດຜ່ານຂອງຕົນ, ສ້າງຂໍ້ມູນປອມ;
5. ສວຍໃຊ້ຊ່ອງວ່າງ ຫຼື ຈຸດອ່ອນ ຂອງລະບົບຂໍ້ມູນ ເພື່ອເຂົ້າເຖິງ, ເກັບກຳ, ນຳໃຊ້ ແລະ ເປີດເຜີຍ ຂໍ້ມູນ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 8 ການປັບປຸງແກ້ໄຂຂໍ້ຄົງຄ້າງ ແລະ ວິທີຈັດຕັ້ງປະຕິບັດ**

**1. ຂັ້ນຕອນການແກ້ໄຂປັບປຸງລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS)**

- ໃນກໍລະນີລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ແບບເອເລັກໂຕຣນິກ (AMIS) ຂັດຂ້ອງ ແລະ ບໍ່ສາມາດດຳເນີນການໄດ້ ຕ້ອງປະສານກັນຢ່າງຮີບດ່ວນ ໂດຍແຈ້ງໃຫ້ກົມຄຸ້ມຄອງຊັບສິນແຫ່ງລັດຊາບ ເພື່ອເປັນໃຈກາງໃນການປະສານງານແກ້ໄຂໃຫ້ທັນການ, ໃນກໍລະນີລະບົບ AMIS ບໍ່ສາມາດດຳເນີນການໄດ້ຊົ່ວຄາວ ແມ່ນໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ແລະ ຂະແໜງການຄຸ້ມຄອງຊັບສິນຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ປະຕິບັດຕາມຂັ້ນຕອນປ້ອນຂໍ້ມູນ, ບັນທຶກຂໍ້ມູນໃນແບບຟອມ Excel ຕາມກົດໝາຍກຳນົດ ແລະ ລົງບັນຊີຕາມປົກກະຕິ ຈົນກວ່າລະບົບຈະສາມາດນຳໃຊ້ຢ່າງເປັນປົກກະຕິ, ພ້ອມດຽວກັນນັ້ນກໍ່ຕ້ອງຮັບປະກັນການບັນທຶກຂໍ້ມູນເຂົ້າລະບົບຄືນທັງໝົດ;
- ໃນກໍລະນີ ຕ້ອງການປ່ຽນແປງ (ດັດແກ້) ຫຼື ຍົກເລີກ ລາຍການຊັບສິນຂອງລັດປະເພດຕ່າງໆຢູ່ລະບົບ AMIS, ມອບໃຫ້ກົມຄຸ້ມຄອງຊັບສິນແຫ່ງລັດ ເປັນເຈົ້າການ ປະສານສົມທົບກັບຜູ້ປະຕິບັດບັນທຶກຂໍ້ມູນຕົວຈິງ ແລະ ບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ສ້າງບົດບັນທຶກຮ່ວມ ເພື່ອດັດແກ້ລາຍການຊັບສິນ ແລະ ລາຍງານຜູ້ດູແລລະບົບ AMIS ເພື່ອດັດແກ້ ຂໍ້ມູນດັ່ງກ່າວ ຢ່າງເປັນທາງການ ເພື່ອດຳເນີນການດັດແກ້ຕາມກົດໝາຍ ແລະ ລະບຽບການ.

**2. ວິທີຈັດຕັ້ງປະຕິບັດ**

- ມອບໃຫ້ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່, ແນະນຳໃຫ້ພະນັກງານຂະແໜງການຕົນ ໃຫ້ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ;

- ສ້າງກົນໄກປະສານສົມທົບ, ຈຸດປະສານງານ ໃນກໍລະນີ ມີຂໍ້ຄົງຄ້າງທີ່ເກີດຂຶ້ນຈາກການປະຕິບັດນິຕິກຳສະບັບນີ້, ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ແລະ ຂະແໜງການຄຸ້ມຄອງຊັບສິນ ຂອງບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງປຶກສາຫາລື, ຊອກຫາວິທີແກ້ໄຂ ຫຼື ນຳສະເໜີຂໍທິດຊີ້ນຳຈາກຂັ້ນເທິງຢ່າງທັນການ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ສົມດີ ດວງດີ